ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຄະນະພັກ-ຄະນະນຳ ທຫລ ເຂົ້າໄວ້ອາໄລ ອະດີດເລຂາທິການໃຫຍ່ ຄະນະບໍລິຫານງານ ສູນກາງພັກຄອມມູນິດຫວຽດນາມ



ໃນຕອນບ່າຍຂອງວັນທີ 14 ສິງຫາ 2020 ທີ່ ສະຖານເອກອັກຄະລັດຖະທູດແຫ່ງ ສ.ສ. ຫວຽດນາມ ປະຈຳ ສປປ ລາວ, ນະຄອນຫລວງວຽງຈັນ. ຄະນະພັກ-ຄະນະນຳ ທະນາຄານແຫ່ງ ສປປ ລາວ (ທຫລ) ນຳໂດຍ ສະຫາຍ ນ. ວັດທະນາ ດາລາລອຍ, ຄະນະປະຈຳພັກ, ຮອງຜູ້ວ່າການ ທຫລ ໄດ້ເຂົ້າໄຫວ້ອາໄລແດ່ ສະຫາຍ ເລ ຂາ ຟຽວ ອະດີດເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກຄອມມູນິດ ສ.ສ. ຫວຽດນາມ ຊຶ່ງໄດ້ເຖິງແກ່ມໍລະນະກຳເມື່ອວັນທີ 7 ສິງຫາ 2020 ທີ່ຜ່ານມາ. ພ້ອມດຽວກັນນີ້ ກໍໄດ້ຕາງໜ້າໃຫ້ຄະນະນຳ ທຫລ ຂຽນຄວາມຮູ້ສຶກລົງໃນປຶ້ມໄຫວ້ອາໄລ ເພື່ອສະແດງຄວາມໂສກເສົ້າເສຍດາຍເປັນຢ່າງຍິ່ງ ຕໍ່ການຈາກໄປຂອງ ສະຫາຍອະດີດເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກຄອມມູນິດຫວຽດນາມ ຢ່າງບໍ່ມີວັນຫວນກັບມາ. ການຈາກໄປຂອງສະຫາຍ ເລ ຂາ ຟຽວ ເປັນການສູນເສຍອັນໃຫຍ່ຫຼວງຂອງ ພັກ, ລັດ ແລະ ປະຊາຊົນຫວຽດນາມ, ສູນເສຍນັກປະຕິວັດຜູ້ອົງອາດກ້າຫານບໍ່ຍອມຈຳນົນ, ຜູ້ນຳທີ່ເຄົາລົບຮັກຂອງ ພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ. ຕະຫຼອດໄລຍະຫຼາຍທົດສະວັດທີ່ຜ່ານມາ ສະຫາຍ ເລຂາ ຟຽວ ໄດ້ມີການປະກອບສ່ວນຢ່າງໃຫຍ່ຫຼວງເຂົ້າໃນພາລະກິດສ້າງສາພັດທະນາ ແລະ ປົກປັກຮັກສາປະເທດຊາດຫວຽດນາມ ເຮັດໃຫ້ປະເທດຊາດຫວຽດນາມ ມີການພັດທະນາຢ່າງບໍ່ຢຸດຢັ້ງ.